ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 29 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ກໍລະກົດ 2016

ສໍານັກງານ ຄຄຊ
ເລກທີ 0703
ວັນທີ 21 JUL 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈໍາອາທິດ
## ທີ 04/07/2016 ຫາ 08/07/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແຕ່ແຂງຄ່າຂຶ້ນ ເມື່ອທຽບໃສ່ຫຼາຍສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນອັດຕາການວ່າງງານປະຈໍາເດືອນ 6/2016 ເພີ່ມຂຶ້ນ ເປັນ 4,9% ຈາກ 4,7% ໃນເດືອນຜ່ານມາ ແລະ ໃນເດືອນ 5/2016 ສະຫະລັດອາເມລິກາຂາດດຸນການຄ້າເພີ່ມຂຶ້ນເປັນ 41,1 ຕື້ໂດລາ ຈາກຂາດດຸນ 37,4 ຕື້ໂດລາໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 01/07/2016 | ອາທິດນີ້ 08/07/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1030 | 1,1064 | -0,31% |
| ໂດລາ/ເຢນ | 101,93 | 100,52 | 1,40% |
| ໂດລາ/ບາດ | 35,33 | 35,240 | 0,24% |
| ໂດລາ/ເປໂຊ | 47,05 | 47,16 | -0,23% |
| ໂດລາ/ຣູເປັຍ | 13.366,33 | 13.100,00 | 2,03% |
| ໂດລາ/ໂດລາສິງກະໂປ | 1,3569 | 1,3475 | 0,70% |
| ໂດລາ/ຢວນ | 6,6365 | 6,6864 | -0,75% |

1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

ລາຄານໍ້າມັນໃນຕະຫຼາດໂລກຫຼຸດລົງ 1,61% ຈາກ 48,68 ໂດລາ/ບາເຣວ ມາເປັນ 47,90 ໂດລາ/ບາເຣວ ພາຍຫຼັງໄນຈີເລຍໄດ້ສໍາເລັດການສ້ອມແປງທໍ່ຂົນສົ່ງນໍ້າມັນທີ່ກຸ່ມຕິດອາວຸດມ້າງທໍາລາຍໃນເດືອນຜ່ານມາ ແລະ ຄາດວ່າຈະເພີ່ມກໍາລັງການຜະ

ລົດເປັນ 1,8 ຫາ 1,9 ລ້ານບາເຣວຕໍ່ວັນ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 2,25% ຈາກ 1.326,53 ມາເປັນ 1.356,40 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,19% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,10% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,20% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,26% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,73% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,86% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,50% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,47% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 01/07/2016 | | | ອາທິດນີ້ 08/07/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.088,96 | 8.120,93 | 8.109,17 | 8.084,41 | 8.111,86 | 8.094,04 | 0,06% | 0,11% | 0,19% |
| ບາດ | 230,66 | 232,29 | 231,31 | 230,20 | 231,87 | 231,78 | 0,20% | 0,18% | -0,20% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.122,75 | 8.155,75 | 8.139,25 | 8.118,92 | 8.143,37 | 8.131,14 | 0,05% | 0,15% | 0,10% |
| ບາດ | 231,23 | 232,16 | 231,69 | 231,87 | 232,74 | 232,30 | -0,28% | -0,25% | -0,26% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,42% | 0,43% | 0,37% | 0,43% | 0,39% | 0,46% | | | |
| ບາດ | 0,24% | -0,06% | 0,17% | 0,72% | 0,38% | 0,23% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,27% ທຽບໃສ່ວັນທີ 01/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 4,36%;
- ປະລິມານເງິນ M2 ຫຼຸດລົງ 0,51% ເມື່ອທຽບໃສ່ວັນທີ 01/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,11%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 04-08/07/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 18,52 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 52,65 ລ້ານໂດລາ ແລະ ຂາຍໂດລາໄດ້ 34,13 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.276,92 ລ້ານບາດ (ໃນນີ້ ຊື້ບາດໄດ້ 356,74 ລ້ານບາດ ແລະ ຂາຍບາດໄດ້ 1.633,66 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 7,14% ແລະ ເພີ່ມຂຶ້ນ 52,43% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 1,47 ລ້ານໂດລາ ແລະ ເງິນບາດມີຈຳນວນ 127,60 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 15,40 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 20 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 2,89 ລ້ານໂດລາ ແຕ່ຊື້ເງິນບາດໄດ້ສຸດທິ ຈຳນວນ 0,42 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/06-01/07/2016 | | ອາທິດທີ 04-08/07/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **42,28** | **276,55** | **52,65** | **356,74** | **24,53%** | **29,00%** |
| - ທ/ຄທຸລະກິດລັດ | 17,49 | 143,66 | 12,77 | 247,27 | -26,98% | 72,12% |
| - ທ/ຄທຸລະກິດອື່ນໆ | 24,78 | 132,89 | 39,87 | 109,46 | 60,89% | -17,63% |
| **2. ການຂາຍເງິນຕາຕ່າງປະເທດ** | **38,72** | **1.029,25** | **34,13** | **1.633,66** | **-11,85%** | **58,72%** |
| - ທ/ຄທຸລະກິດລັດ | 31,88 | 227,21 | 23,39 | 202,39 | -26,62% | -10,92% |
| - ທ/ຄທຸລະກິດອື່ນໆ | 6,84 | 802,04 | 10,74 | 1.431,27 | 56,99% | 78,45% |
| **ຊື້-ຂາຍສຸດທິ ທທກ** | **3,56** | **-752,70** | **18,52** | **-1.276,92** | **420,71%** | **69,64%** |
| ຜິດດ່ຽງ ຊື້-ຂາຍ | 8,41% | -272,17% | 35,17% | -357,94% | 318,14% | 31,51% |
| ມູນຄ່າການຊື້-ຂາຍ | **80,99** | **1.305,80** | **86,78** | **1.990,40** | **7,14%** | **52,43%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-21,90** | **-12,00** | **-15,40** | **-20,00** | | |
| - ທຫລ ຊື້ຈາກ ທທກ | 5,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 26,90 | 12,00 | 15,40 | 20,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **4,30** | **151,00** | **1,47** | **127,60** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,11** | **0,00** | **-2,89** | **0,42** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,12 | 0,00 | 0,12 | 0,42 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,01 | 0,00 | 3,01 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2016 ຢູ່ໃນລະດັບ 1,62% ເພີ່ມຂຶ້ນ 1,17% ຈາກ 0,45% ໃນເດືອນ 05/2016.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 49,76 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 49% ທຽບໃສ່ອາທິດຜ່ານມາ.

III. ວຽກງານວິຊາສະເພາະ

1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 758 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 14,83% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 463,92 ຕື້ກີບ ເພີ່ມຂຶ້ນ 16,70% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/07/2016) ມີຈຳນວນ 1.996 ຄັ້ງ ໂດຍມີມູນຄ່າ 455,48 ຕື້ກີບ ຫຼຸດລົງ 13,54% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 557 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.106,24 ຈຸດ ຫຼຸດລົງ 1% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 279.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,54 ຕື້ກີບ ເພີ່ມຂຶ້ນ 200,44% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 43,50% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.851 ກີບ/ຮຸ້ນ ເພີ່ມຂຶ້ນ 49 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 15.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 75,67 ລ້ານກີບ ຫຼຸດລົງ 18,34% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 47,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,32%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.573 ກີບ/ຮຸ້ນ ເພີ່ມຂຶ້ນ 12 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 263.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,46 ຕື້ກີບ ເພີ່ມຂຶ້ນ 247,82% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 45,88% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.500 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ການຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາປິດ 2.600 ກີບ/ຮຸ້ນ ຫຼຸດລົງ 200 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,78 ລ້ານກີບ ເພີ່ມຂຶ້ນ 178,57% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.100 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,31 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການເຂົ້າຮ່ວມ: ❶ກອງປະຊຸມທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ 7/2016 ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ❷ກອງປະຊຸມສອງຝ່າຍລະຫວ່າງທະນາແຫ່ງ ສປປ ລາວ ກັບ ທະນາຄານແຫ່ງປະເທດໄທ ທີ່ຫົວຫີນ ປະເທດໄທ, ❸ເປັນປະທານກອງປະຊຸມປຶກສາຫາລືວຽກງານ ສະຖາບັນການເງິນ ຢູ່ ທຫລ ພາກໃຕ້ ແຂວງຈຳປາສັກ;
- ສຳເລັດການຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງສຳນັກງານຂໍ້ມູນຕ້ານການຟອກເງິນທະນາຄານແຫ່ງ ສປປ ລາວ ແລະ ກົມສຳມະໂນຄົວ ແລະ ກໍ່ສ້າງພື້ນຖານ, ກະຊວງປ້ອງກັນຄວາມສະຫງົບສູງສຸດ ແລະ ຫ້ອງການສານປະຊາຊົນສູງສຸດ ເພື່ອແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ໃຫ້ມີປະສິດທິພາບ ທີ່ ທຫລ;
- ສຳເລັດການເຂົ້າຮ່ວມ: ❶ຝຶກອົບຮົມ ໃນຫົວຂໍ້ "GMS Capital Market Academy-Greater Mekong Subregion (CMA-GMS) International Program 2016" ໄລຍະທີ 03 ທີ່ປະເທດ ໄທ, ❷ ຝຶກອົບຮົມດ້ານວິຊາການ ໃນຫົວຂໍ້: "ການສ້າງຄວາມເຂັ້ມແຂງເສດຖະກິດມະຫາພາກຂອງຫ້ອງການ TAOLAM" ທີ່ ໂຮງແຮມລາວພຣາ

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຊາ, ❸ກອງປະຊຸມສຳມະນາ ໃນຫົວຂໍ້: "Workshop on AEC 2025 New Focus Areas E-Commerce and Global value Chains" ທີ່ ໂຮງແຮມລາວພຣາຊາ, ❹ກອງປະຊຸມສຳມະນາ ໃນຫົວຂໍ້: "ວຽກງານຄຸ້ມຄອງທະນາຄານທຸລະກິດ" ທີ່ແທດໄທ, ❺ກອງປະຊຸມ ໃນຫົວຂໍ້: "International Conference on Sustainable Finance" ທີ່ປະເທດເຢຍລະມັນ; ❻ກອງປະຊຸມປຶກສາຫາລືກັບກະຊວງການເງິນ ກ່ຽວກັບການທົບທວນຄືນການຊ່ວຍເຫຼືອທາງດ້ານວິຊາການຂອງຄະນະຊ່ຽວຊານໂນມູລະ ທີ່ກະຊວງການເງິນ, ❼ກອງປະຊຸມປຶກສາຫາລືພາຍໃນ ເພື່ອກະກຽມໃຫ້ແກ່ກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ ຄັ້ງທີ 48 ທີ່ກະຊວງອຸດສາຫະກຳ ແລະ ການຄ້າ, ❽ກອງປະຊຸມ ໃນຫົວຂໍ້: "The Mekong Region Credit Information Sharing" ຢູ່ປະເທດ ໄທ ແລະ ❾ກອງປະຊຸມສຳມະນາກ່ຽວກັບເນື້ອໃນຕົ້ນຕໍຂອງວຽກງານກໍ່ສ້າງພັກ, ກໍ່ສ້າງພະນັກງານ ແລະ ວຽກງານກົງຈັກ ເພື່ອກະກຽມໃຫ້ແກ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 10 ທີ່ສະໂມສອນຄະນະຈັດຕັ້ງສູນກາງພັກ (ຫຼັກ 6);

- ສຳເລັດການເຊັນບົດບັນທຶກຮັບຮອງຜົນການປະເມີນການປະຕິບັດຕາມຫຼັກການສຳຄັນຂອງ ບາເຊວ ເພື່ອການຄຸ້ມຄອງທະນາຄານທີ່ມີປະສິດທິຜົນ ຮ່ວມກັບບໍລິສັດ EY ລາວ.

IV. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າບົດແນະນຳມາດຕະຖານສາກົນດ້ານການບັນຊີ IAS18 ແລະ ລາຍຮັບ IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ, ❸ຄົ້ນຄວ້າການຄຸ້ມຄອງບໍລິສັດຫຼັກຊັບຕາມການຕີລາຄາຄວາມສ່ຽງ (Risk Based Supervision) ແລະການເຊື່ອມຕໍ່ລະຫວ່າງທະນາຄານຕົວແທນ (Multiple Bank Link);
- ສືບຕໍ່ສ້າງປື້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ບໍລິຫານ

ເພັດສະຖາພອນ ແກ້ວວົງວິຈິດ